ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຍົກລະດັບຄວາມຮູ້ກ່ຽວກັບ ການບໍລິການທີ່ບໍ່ຜ່ານສາຂາທະນາຄານ



ໃນລະຫວ່າງວັນທີ 02-03 ກັນຍາ 2019 ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບ ທະນາຄານພັດທະນາອາຊີ (ADB) ໄດ້ຈັດການຝຶກອົບຮົມໃນຫົວຂໍ້: "ລະບຽບການສຳລັບການທະນາຄານບໍ່ຜ່ານສາຂາ (Regulatory Framework for Branchless banking)" ຂຶ້ນທີ່ ອາຄານສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໂດຍການເປັນປະທານຂອງທ່ານ ພົນທະບູນ ໄຊຍະເພັດ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ທຫລ, ທ່ານ Shigehiro Shinozak ນັກເສດຖະສາດອາວຸໂສ ຈາກທະນາຄານພັດທະນາອາຊີ, ພ້ອມດ້ວຍຜູ້ບັນຍາຍຈາກບັນດາທະນາຄານກາງຂອງປະເທດໃນກຸ່ມອາຊຽນ ແລະ ນັກຝຶກອົບຮົມ 30 ທ່ານທີ່ມາຈາກບັນດາກົມ ແລະ ສາຂາຂອງ ທຫລ.

ການບໍລິການທີ່ບໍ່ຜ່ານສາຂາທະນາຄານ (Branchless banking) ແມ່ນການດຳເນີນທຸລະກຳການທະນາຄານໂດຍຜ່ານການນຳໃຊ້ໂທລະສັບມືຖື, ຕົວແທນທະນາຄານ ແລະ ເຕັກໂນໂລຊີການສື່ສານທີ່ທັນສະໄໝ, ຊຶ່ງໃນໄລຍະຜ່ານມາແມ່ນໄດ້ຮັບຄວາມນິຍົມຢ່າງກວ້າງຂວາງຈາກບັນດາສະຖາບັນການເງິນໃນຫຼາຍປະເທດທີ່ກຳລັງພັດທະນາ ແລະ ໄດ້ເຮັດໃຫ້ຈຳນວນການເຂົ້າເຖິງການບໍລິການດ້ານການເງິນຂອງປະຊາຊົນທີ່ຢູ່ໃນເຂດຫ່າງໄກສອກຫຼີກ ເພີ່ມຂຶ້ນ ແລະ ເປັນລະບົບການຊຳລະທີ່ສຳຄັນໃນອົງປະກອບທາງດ້ານເສດຖະກິດ. ໃນນີ້, ທຫລ ໄດ້ວາງແນວທາງນະໂຍບາຍໃນການຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ ຄຽງຄູ່ກັບການຮັກສາສະເຖຍລະພາບທາງດ້ານເງິນຕາແຫ່ງຊາດ ແລະ ການຄຸ້ມຄອງລະບົບຊຳລະສະສາງ ເພື່ອເປັນການປະກອບສ່ວນໃຫ້ແກ່ການຊຸກຍູ້ພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໂດຍໄດ້ສ້າງແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ແຕ່ປີ 2018-2025.

ໃນການຝຶກອົບຮົມຜູ້ບັນຍາຍຈາກບັນດາທະນາຄານກາງຂອງປະເທດໃນກຸ່ມອາຊຽນໄດ້ຍົກໃຫ້ເຫັນເຖິງປະສົບການ ແລະ ສິ່ງທ້າທາຍກ່ຽວກັບການດຳເນີນທຸລະກຳການທະນາຄານບໍ່ຜ່ານສາຂາໃນປະເທດຂອງຕົນ, ນັກສຳມະນາກອນໄດ້ມີຄວາມສົນໃຈ ແລະ ພ້ອມຍັງມີຄຳເຫັນຢ່າງເປັນຂະບວນຟົດຟື້ນ.

# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.

ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ